ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ (ບ້ວງນ້ຳເທີນ 2)
ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2012

# ປຶ້ມຝຶກຫັດ

# ໜ່ວຍສິ່ງຕ່າງໆອ້ອມຕົວເຮົາ

## ຊັ້ນອະນຸບານສຶກສາປີທີ 1



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2012

# ປຶ້ມຝຶກຫັດ

# ເນື້ອໃນໜ່ວຍການສອນ

# ສິ່ງຕ່າງໆອ້ອມຕົວເຮົາ

# ສຳລັບເດັກ

# ຊັ້ນອະນຸບານສຶກສາ ປີທີ 1


| | |
|---|---|
| ຮຽບຮຽງໂດຍ: | ແສງມະນີ ສຸພັນທະລົບ |
| ກວດແກ້ໂດຍ: | ພວງຄຳ ສົມສະນິດ |
| | ທອງແກ້ວ ອາສາ |
| | ປາກຽນ ຫຼວງໄຊຊະນະ |
| | ສົມບູນ ມາສຸວັນ |
| | ເກດ ພັນລັກ |
| | ສີພາພອນ ມະນີວັນ |
| | ວຽງແກ້ວ ພົມມະຈັກ |
| | ມະນີວອນ ອາດຜາສຸກ |
| | ພູມີ ພົມມະວົງສາ |
| ເຂົ້າໜ້າໂດຍ: | ທຸມພັນ ຂັນທະວີ |
| | ສີວິໄລ ແກ້ວມະນີວັນ |



ກະຊວງສຶກສາທິການ ແລະ ກິລາ

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

2012

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກ ດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກໄດ້ສັງເກດ, ທົດລອງ, ຄົ້ນຄິດມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກມັກ ແລະ ສົນໃຈຮຽນວິທະຍາສາດຫຼາຍຂຶ້ນ.

ປຶ້ມບົດເຝິກຫັດໜ່ວຍສິ່ງຕ່າງໆອ້ອມຕົວເຮົາເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ວິທະຍາສາດທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກອາຍຸ 3-4 ປີ.

ປຶ້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານ ກ່ຽວກັບເລື່ອງໜ່ວຍສິ່ງຕ່າງໆອ້ອມຕົວເຮົາມີດັ່ງນີ້:

1. ປະເພດສິ່ງຂອງເຄື່ອງໃຊ້, ເຄື່ອງຫຼິ້ນ, ເຄື່ອງນຸ່ງ, ອາຫານ ແລະ ເຄື່ອງດື່ມ.
2. ຄຸນລັກສະນະຂອງເຄື່ອງໃຊ້, ເຄື່ອງຫຼິ້ນ, ເຄື່ອງນຸ່ງ, ອາຫານ ແລະ ເຄື່ອງດື່ມ.
3. ປະໂຫຍດ ແລະ ຂໍ້ຄວນລະວັງໃນການນຳໃຊ້ເຄື່ອງໃຊ້, ເຄື່ອງຫຼິ້ນ, ເຄື່ອງນຸ່ງ, ອາຫານ ແລະ ເຄື່ອງດື່ມ.
4. ການເກັບມ້ຽນ ແລະ ບົວລະບັດຮັກສາເຄື່ອງໃຊ້, ເຄື່ອງຫຼິ້ນ, ເຄື່ອງນຸ່ງ, ອາຫານ ແລະ ເຄື່ອງດື່ມ.

ການນຳໃຊ້ປຶ້ມບົດເຝິກຫັດໜ່ວຍສິ່ງຕ່າງໆອ້ອມຕົວເຮົາ ເຂົ້າໃນການກຽມຄວາມພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາແລ້ວ, ພ້ອມກັນນັ້ນ ຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ເດັກໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປຶ້ມຫົວນີ້ດ້ວຍຕົນເອງໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປຶ້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປຶ້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ

**ໜ້າ**

ກິດຈະກຳການຮຽນ-ການສອນ ໜ່ວຍສິ່ງຕ່າງໆ ອ້ອມຕົວເຮົາ ສຳລັບຊັ້ນອະນຸບານສຶກສາ
ປີທີ 1........ 1
ປະເພດສິ່ງຂອງຕ່າງໆ........ 2
ເຄື່ອງໃຊ້ໃນຫ້ອງຮຽນ........ 3
ເຄື່ອງຫຼິ້ນ........ 4
ເຄື່ອງຫຼິ້ນ (ຕໍ່)........ 5
ເຄື່ອງນຸ່ງ........ 6
ເຄື່ອງນຸ່ງ (ຕໍ່)........ 7
ເຄື່ອງນຸ່ງ (ຕໍ່)........ 8
ອາຫານ........ 9
ອາຫານ (ຕໍ່)........ 10
ອາຫານ (ຕໍ່)........ 11
ອາຫານ (ຕໍ່)........ 12
ອາຫານ (ຕໍ່)........ 13
ອາຫານ (ຕໍ່)........ 14
ເຄື່ອງດື່ມ........ 15
ເຄື່ອງດື່ມ (ຕໍ່)........ 16
ຄຸນລັກສະນະຂອງສິ່ງຕ່າງໆ........ 17
ລັກສະນະຂອງເນື້ອຜ້າ........ 18
ສຽງຂອງສິ່ງຕ່າງໆ........ 19
ກິ່ນ ແລະ ລົດຊາດຂອງອາຫານ........ 20
ລົດຊາດຂອງເຄື່ອງດື່ມ........ 21
ປະໂຫຍດ ແລະ ຂໍ້ຄວນລະວັງໃນການນຳໃຊ້ສິ່ງຕ່າງໆ........ 22
ປະໂຫຍດຂອງເຄື່ອງໃຊ້ໃນຫ້ອງຮຽນ ແລະ ສິ່ງທີ່ຄວນລະວັງໃນການນຳໃຊ້........ 23
ປະໂຫຍດຂອງເຄື່ອງໃຊ້ໃນຫ້ອງຮຽນ ແລະ ສິ່ງທີ່ຄວນລະວັງໃນການນຳໃຊ້ (ຕໍ່)........ 24
ປະໂຫຍດຂອງເຄື່ອງໃຊ້ໃນຫ້ອງຮຽນ ແລະ ສິ່ງທີ່ຄວນລະວັງໃນການນຳໃຊ້ (ຕໍ່)........ 25
ປະໂຫຍດຂອງເຄື່ອງໃຊ້ໃນຫ້ອງຮຽນ ແລະ ສິ່ງທີ່ຄວນລະວັງໃນການນຳໃຊ້ (ຕໍ່)........ 26

ປະໂຫຍດຂອງເຄື່ອງນຸ່ງ ແລະ ສິ່ງທີ່ຄວນລະວັງໃນການນຸ່ງຖື.................................................. 27
ປະໂຫຍດຂອງເຄື່ອງຫຼິ້ນ ແລະ ສິ່ງທີ່ຄວນລະວັງໃນການຫຼິ້ນ.................................................. 28
ປະໂຫຍດຂອງອາຫານ ແລະ ສິ່ງທີ່ຄວນລະວັງໃນການກິນອາຫານ........................................ 29
ປະໂຫຍດຂອງເຄື່ອງດື່ມ ແລະ ສິ່ງທີ່ຄວນລະວັງໃນການດື່ມ.................................................. 30
ເກັບມ້ຽນ ແລະ ບົວລະບັດຮັກສາ.............................................................................................. 31
ເຄື່ອງໃຊ້ໃນຫ້ອງຮຽນ.............................................................................................................. 32
ເຄື່ອງນຸ່ງ.............................................................................................................................. 33
ເຄື່ອງຫຼິ້ນ.............................................................................................................................. 34
ອາຫານ................................................................................................................................ 35
ເຄື່ອງດື່ມ.............................................................................................................................. 36

# ກິດຈະກຳການຮຽນ-ການສອນ
# ໜ່ວຍ: ສິ່ງຕ່າງໆອ້ອມຕົວເຮົາ

ສຳລັບຊັ້ນອະນຸບານສຶກສາ ປີທີ 1



**ເນື້ອໃນການຮຽນຂອງໜ່ວຍສິ່ງຕ່າງໆອ້ອມຕົວເຮົາປະກອບມີ:**

1. ປະເພດສິ່ງຂອງຕ່າງໆ.
2. ຄຸນລັກສະນະຂອງສິ່ງຕ່າງໆ.
3. ປະໂຫຍດ ແລະ ໂທດ.
4. ເກັບມ້ຽນ ແລະ ບົວລະບັດຮັກສາ.

# ປະເພດສິ່ງຂອງຕ່າງໆ









**ເນື້ອໃນການຮຽນໃນຫົວຂໍ້ປະເພດສິ່ງຂອງຕ່າງໆປະກອບມີ:**

1. ເຄື່ອງໃຊ້ໃນຫ້ອງຮຽນ.
2. ເຄື່ອງຫຼິ້ນ.
3. ເຄື່ອງນຸ່ງ.
4. ອາຫານ.
5. ເຄື່ອງດື່ມ.

# ເຄື່ອງໃຊ້ໃນຫ້ອງຮຽນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເຄື່ອງໃຊ້ໃນຫ້ອງຮຽນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ໃນຫ້ອງຮຽນຂອງຫຼານມີເຄື່ອງໃຊ້ຫຍັງແດ່?
- ສະຫຼຸບ: ເຄື່ອງໃຊ້ໃນຫ້ອງຮຽນມີ ຕັ່ງ, ໂຕະ, ຕູ້, ກ່ອງເກັບຜົນງານ ແລະ ຕູ້ມ້ຽນ ເຄື່ອງ.
- ທາສີຮູບເຄື່ອງໃຊ້ໃນຫ້ອງຮຽນ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງຫຼິ້ນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເຄື່ອງຫຼິ້ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານມີເຄື່ອງຫຼິ້ນ ຫຍັງແດ່?
- ສະຫຼຸບ: ເຄື່ອງຫຼິ້ນມີລົດນ້ອຍ ແລະ ເຮືອບິນນ້ອຍ.
- ທາສີຮູບເຮືອບິນ ແລະ ລົດ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງຫຼິ້ນ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເຄື່ອງຫຼິ້ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານມີເຄື່ອງຫຼິ້ນ ຫຍັງແດ່?
- ສະຫຼຸບ: ເຄື່ອງຫຼິ້ນມີ ຕຸກກະຕາ, ໝາກບານ ແລະ ໄມ້ບັ້ອກ.
- ທາສີຮູບຕຸກກະຕາ, ໝາກບານ ແລະ ໄມ້ບັ້ອກ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງນຸ່ງ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເຄື່ອງນຸ່ງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ເດັກນ້ອຍຊາຍນຸ່ງຫຍັງ?
- ສະຫຼຸບ: ເຄື່ອງນຸ່ງມີໂສ້ງ.
- ທາສີຮູບໂສ້ງ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງນຸ່ງ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເຄື່ອງນຸ່ງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ເດັກນ້ອຍຊາຍ ແລະ ຍິງນຸ່ງຫຍັງ?
- ສະຫຼຸບ: ເຄື່ອງນຸ່ງມີເສື້ອ.
- ທາສີຮູບເສື້ອ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງນຸ່ງ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເຄື່ອງນຸ່ງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ເດັກນ້ອຍຍິງນຸ່ງຫຍັງ?
- ສະຫຼຸບ: ເຄື່ອງນຸ່ງມີ ສິ້ນ ແລະ ກະໂປງ.
- ທາສີຮູບສິ້ນ ແລະ ກະໂປງ ໂດຍນຳໃຊ້ສີຕາມໃຈ.

# ອາຫານ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ອາຫານ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍກິນໄຂ່ບໍ?
- ສະຫຼຸບ: ອາຫານມີ ໄຂ່.
- ທາສີຮູບໄຂ່ ໂດຍນຳໃຊ້ສີຕາມໃຈ ໂດຍນຳໃຊ້ສີຕາມໃຈ.

# ອາຫານ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ອາຫານ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍກິນຊີ້ນບໍ?
- ສະຫຼຸບ: ອາຫານມີ ຊີ້ນໄກ່.
- ທາສີຮູບໄກ່ ໂດຍນຳໃຊ້ສີຕາມໃຈ.

# ອາຫານ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ອາຫານ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານ ເຄີຍໄດ້ກິນປາບໍ?
- ສະຫຼຸບ: ອາຫານມີ ປາ.
- ທາສີຮູບປາ ໂດຍນຳໃຊ້ສີຕາມໃຈ.

# ອາຫານ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ອາຫານ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍກິນຜັກບໍ?
- ສະຫຼຸບ: ອາຫານມີຜັກ.
- ທາສີຮູບຜັກ ໂດຍນຳໃຊ້ສີຕາມໃຈ.

# ອາຫານ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ອາຫານ.

ກິດຈະກຳ:

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍກິນໝາກໄມ້ບໍ?
- ສະຫຼຸບ: ອາຫານມີໝາກໄມ້.
- ທາສີຮູບໝາກໄມ້ ໂດຍນຳໃຊ້ສີຕາມໃຈ.

# ອາຫານ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ອາຫານ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍກິນເຂົ້າ ແລະ ເຂົ້າໜົມບໍ?
- ສະຫຼຸບ: ອາຫານມີ ເຂົ້າ ແລະ ເຂົ້າໜົມ.
- ທາສີຮູບຕິບເຂົ້າ, ຈານເຂົ້າ ແລະ ເຂົ້າໜົມ ໂດຍນໍາໃຊ້ສີຕາມໃຈ.

# ເຄື່ອງດື່ມ




**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເຄື່ອງດື່ມ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍໄດ້ ດື່ມນ້ຳຫຍັງແດ່?
- ສະຫຼຸບ: ເຄື່ອງດື່ມມີ ນ້ຳນົມ ແລະ ນ້ຳເຕົ້າຮູ້.
- ທາສີຮູບເຄື່ອງດື່ມ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງດື່ມ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເຄື່ອງດື່ມ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍໄດ້ດື່ມນ້ຳຫຍັງແດ່?
- ສະຫຼຸບ: ເຄື່ອງດື່ມ ມີ ນ້ຳໝາກກ້ຽງ ແລະ ນ້ຳໝາກພ້າວ.
- ທາສີຮູບເຄື່ອງດື່ມ ໂດຍນຳໃຊ້ສີຕາມໃຈ.

# ຄຸນລັກສະນະຂອງສິ່ງຕ່າງໆ







**ເນື້ອໃນການຮຽນໃນຫົວຂໍ້ຄຸນລັກສະນະຂອງສິ່ງຕ່າງໆປະກອບມີ:**

1. ຮູບຮ່າງຂອງເຄື່ອງໃຊ້ໃນຫ້ອງຮຽນ.
2. ລັກສະນະຂອງເນື້ອຜ້າ.
3. ສຽງຂອງສິ່ງຕ່າງໆ.
4. ກິນ ແລະ ລົດຊາດຂອງອາຫານ.
5. ລົດຊາດຂອງເຄື່ອງດື່ມ.

# ຄຸນລັກສະນະຂອງສິ່ງຕ່າງໆ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຂະໜາດນ້ອຍ ແລະ ໃຫຍ່.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ໂຕະໃດໃຫຍ່ ແລະ ໂຕະໃດນ້ອຍ?
- ສະຫຼຸບ: ໂຕະ ມີຂະໜາດນ້ອຍ ແລະ ໃຫຍ່ຕ່າງກັນ.
- ທາສີຮູບໂຕະ ໂດຍນຳໃຊ້ສີຕາມໃຈ.

# ລັກສະນະຂອງເນື້ອຜ້າ



**ຈຸດປະສົງ:** ເພື່ອໃຫ້ເດັກບອກລັກສະນະເນື້ອຜ້າ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ເຄື່ອງນຸ່ງຂອງຫຼານມີສະນະແນວໃດ?
- ສະຫຼຸບ: ເຄື່ອງນຸ່ງຂອງເຮົາມີລັກສະນະ ໜາ, ບາງ, ນຸ້ມ ແລະ ແຂງ.
- ທາສີຮູບເສື້ອ ໂດຍນຳໃຊ້ສີຕາມໃຈ.

# ສຽງຂອງສິ່ງຕ່າງໆ



**ຈຸດປະສົງ:** ເພື່ອໃຫ້ເດັກຈຳແນກສຽງຄ່ອຍ ແລະ ສຽງແຮງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງ ໃນຮູບນີ້? ຫຼານເຄີຍ ຕີກອງບໍ?
- ສະຫຼຸບ: ເວລາຕີກອງໃຫຍ່ສຽງຈະດັງແຮງ ແລະ ເວລາຕີກອງນ້ອຍສຽງຈະດັງຄ່ອຍ.
- ທາສີຮູບເດັກນ້ອຍຕີກອງ ໂດຍນຳໃຊ້ສີຕາມໃຈ.

# ກິ່ນ ແລະ ລົດຊາດຂອງອາຫານ



**ຈຸດປະສົງ:** ເພື່ອໃຫ້ເດັກບອກກິ່ນ ແລະ ລົດຊາດຂອງອາຫານ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຖ້າກິນໝາກເຜັດຈະເປັນແນວໃດ? ຖ້າກິນໝາກນາວຈະເປັນແນວໃດ?
- ສະຫຼຸບ: ອາຫານມີທັງກິ່ນຫອມ, ເໝັນ, ມີລົດຊາດເຜັດ, ເຄັມ, ສົ້ມ ແລະ ຫວານ.
- ທາສີຮູບອາຫານ ໂດຍນຳໃຊ້ສີຕາມໃຈ.

# ລົດຊາດຂອງເຄື່ອງດື່ມ




**ຈຸດປະສົງ:** ເພື່ອໃຫ້ເດັກບອກລົດຊາດຂອງເຄື່ອງດື່ມ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ນ້ຳໝາກກ້ຽງສົ້ມ ຫຼື ຫວານ?
- ສະຫຼຸບ: ເຄື່ອງດື່ມ ມີທັງລົດສົ້ມ ແລະ ຫວານ.
- ທາສີຮູບເຄື່ອງດື່ມ ໂດຍນຳໃຊ້ສີຕາມໃຈ.

# ປະໂຫຍດ ແລະ ຂໍ້ຄວນລະວັງໃນການນຳໃຊ້ສິ່ງຕ່າງໆ









**ເນື້ອໃນການຮຽນໃນຫົວຂໍ້ ປະໂຫຍດ ແລະ ຂໍ້ຄວນລະວັງໃນການນ້ຳໃຊ້ສິ່ງຕ່າງໆປະກອບມີ:**

1. ປະໂຫຍດຂອງເຄື່ອງໃຊ້ໃນຫ້ອງຮຽນ ແລະ ສິ່ງທີ່ຄວນລະວັງ ໃນການນຳໃຊ້.
2. ປະໂຫຍດຂອງເຄື່ອງນຸ່ງ ແລະ ສິ່ງທີ່ຄວນລະວັງ ໃນການນຸ່ງຖື.
3. ປະໂຫຍດຂອງເຄື່ອງຫຼິ້ນ ແລະ ສິ່ງທີ່ຄວນລະວັງ ໃນການຫຼິ້ນ.
4. ປະໂຫຍດຂອງອາຫານ ແລະ ສິ່ງທີ່ຄວນລະວັງ ໃນການກິນ.
5. ປະໂຫຍດຂອງເຄື່ອງດື່ມ ແລະ ສິ່ງທີ່ຄວນລະວັງ ໃນການດື່ມ.

# ປະໂຫຍດຂອງເຄື່ອງໃຊ້ໃນຫ້ອງຮຽນ ແລະ ສິ່ງທີ່ຄວນລະວັງໃນການນໍາໃຊ້



**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງເຄື່ອງໃຊ້ໃນຫ້ອງຮຽນ ແລະ ສິ່ງທີ່ຄວນລະວັງໃນການນໍາໃຊ້.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ໂຕະໃຊ້ໄວ້ເຮັດຫຍັງ? ຕັ່ງໃຊ້ໄວ້ເຮັດຫຍັງ?
- ສະຫຼຸບ: ໂຕະໃຊ້ໄວ້ຮອງຂຽນໜັງສື, ຕັ່ງໃຊ້ໄວ້ນັ່ງ, ບໍ່ຄວນປີນໂຕະ ແລະ ຕັ່ງ.
- ທາສີຮູບເດັກນ້ອຍ ແລະ ໂຕະ ໂດຍນໍາໃຊ້ສີຕາມໃຈ.

# ປະໂຫຍດຂອງເຄື່ອງໃຊ້ໃນຫ້ອງຮຽນ ແລະ ສິ່ງທີ່ຄວນລະວັງ ໃນການນຳໃຊ້ (ຕໍ່)





**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງເຄື່ອງໃຊ້ໃນຫ້ອງຮຽນ ແລະ ສິ່ງທີ່ຄວນລະວັງໃນນຳໃຊ້.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຕູ້ໃຊ້ໄວ້ເຮັດຫຍັງ?
- ສະຫຼຸບ: ຕູ້ໃຊ້ມ້ຽນເຄື່ອງ ແລະ ບໍ່ຄວນປີນຕູ້.
- ທາສີຮູບເດັກນ້ອຍມ້ຽນເຄື່ອງ ໂດຍນຳໃຊ້ສີຕາມໃຈ.

# ປະໂຫຍດຂອງເຄື່ອງໃຊ້ໃນຫ້ອງຮຽນ ແລະ ສິ່ງທີ່ຄວນລະວັງ ໃນການນຳໃຊ້ (ຕໍ່)




**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງເຄື່ອງໃຊ້ໃນຫ້ອງຮຽນ ແລະ ສິ່ງທີ່ຄວນລະວັງໃນການນຳໃຊ້.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ກ່ອງເກັບຜົນງານໃຊ້ໄວ້ເຮັດຫຍັງ?
- ສະຫຼຸບ: ກ່ອງເກັບຜົນງານໃຊ້ໄວ້ໃສ່ຜົນງານ ແລະ ບໍ່ຄວນຂຶ້ນນັ່ງກ່ອງ.
- ທາສີຮູບກ່ອງເກັບຜົນງານ ໂດຍນຳໃຊ້ສີຕາມໃຈ.

# ປະໂຫຍດຂອງເຄື່ອງນຸ່ງ ແລະ ສິ່ງທີ່ຄວນລະວັງ ໃນການນຸ່ງຖື



**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງເຄື່ອງນຸ່ງ ແລະ ສິ່ງທີ່ຄວນລະວັງໃນການນຸ່ງຖື.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ນຸ່ງຫຍັງ? ເປັນຫຍັງຫຼານ ຈຶ່ງນຸ່ງເຄື່ອງ? ຄວນນຸ່ງເຄື່ອງແນວໃດເພື່ອບໍ່ໃຫ້ພະຍາດ ເຂົ້າຮ່າງກາຍ?
- ສະຫຼຸບ: ເຄື່ອງນຸ່ງພາໃຫ້ຮ່າງກາຍອົບອຸ່ນ, ບໍ່ນຸ່ງເຄື່ອງເປື້ອນ ແລະ ເຄື່ອງປຽກ ຊຸ່ມ.
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ປະໂຫຍດຂອງເຄື່ອງຫຼິ້ນ ແລະ ສິ່ງທີ່ຄວນລະວັງໃນການຫຼິ້ນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງເຄື່ອງຫຼິ້ນ ແລະ ສິ່ງທີ່ຄວນລະວັງໃນການຫຼິ້ນ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍໄດ້ຫຼິ້ນເຄື່ອງຫຼິ້ນຫຍັງແດ່?
- ສະຫຼຸບ: ປະໂຫຍດຂອງເຄື່ອງຫຼິ້ນແມ່ນ ຫຼິ້ນມ່ວນຊື່ນ, ຫຼິ້ນເພື່ອຮຽນຮູ້, ບໍ່ແກວ່ງເຄື່ອງຫຼິ້ນໃສ່ກັນ, ບໍ່ຍັດໃສ່ຮູດັງ, ຮູຫູ ແລະ ບໍ່ອົມເຄື່ອງຫຼິ້ນ.
- ທາສີຮູບເຄື່ອງຫຼິ້ນ ໂດຍນໍາໃຊ້ສີຕາມໃຈ.

# ປະໂຫຍດຂອງອາຫານ ແລະ ສິ່ງທີ່ຄວນລະວັງໃນການກິນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງອາຫານ ແລະ ສິ່ງທີ່ຄວນລະວັງໃນການກິນອາຫານ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຫຼານເຄີຍກິນອາຫານຫຍັງແດ່? ຢາກໃຫ້ຮ່າງກາຍແຂງແຮງຄວນກິນອາຫານແນວໃດ?
- ສະຫຼຸບ: ປະໂຫຍດຂອງອາຫານ ກິນແລ້ວເຮັດໃຫ້ຮ່າງກາຍແຂງແຮງ ແລະ ບໍ່ກິນອາຫານບູດ, ອາຫານທີ່ມີແມງວັນຕອມ ແລະ ອາຫານທີ່ໃສ່ສີ.
- ທາສີຮູບເດັກນ້ອຍກິນອາຫານ ໂດຍນຳໃຊ້ສີຕາມໃຈ.

# ປະໂຫຍດຂອງເຄື່ອງດື່ມ ແລະ ສິ່ງທີ່ຄວນລະວັງໃນການດື່ມ



**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງເຄື່ອງດື່ມ ແລະ ສິ່ງທີ່ຄວນລະວັງໃນການດື່ມ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ເພື່ອໃຫ້ຮ່າງກາຍແຂງແຮງ ຫຼານຄວນດື່ມນ້ຳຫຍັງແດ່?
- ສະຫຼຸບ: ປະໂຫຍດຂອງເຄື່ອງດື່ມ, ດື່ມແລ້ວເຮັດໃຫ້ຮ່າງກາຍແຂງແຮງ, ບໍ່ດື່ມ ນ້ຳດິບ, ນ້ຳອັດລົມ, ບໍ່ດື່ມເຄື່ອງດື່ມທີ່ມີລົດຫວານ ແລະ ເຢັນໂພດ.
- ທາສີຮູບເດັກດື່ມນ້ຳ ໂດຍນຳໃຊ້ສີຕາມໃຈ.

# ເກັບມ້ຽນ ແລະ ບົວລະບັດຮັກສາ









**ເນື້ອໃນການຮຽນຂອງຫົວຂໍ້ ການເກັບມ້ຽນ ແລະ ບົວລະບັດຮັກສາປະກອບມີ:**

1. ເຄື່ອງໃຊ້ໃນຫ້ອງຮຽນ.
2. ເຄື່ອງນຸ່ງ.
3. ເຄື່ອງຫຼິ້ນ.
4. ອາຫານ.
5. ເຄື່ອງດື່ມ.

# ເຄື່ອງໃຊ້ໃນຫ້ອງຮຽນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການບົວລະບັດຮັກສາເຄື່ອງໃຊ້ໃນຫ້ອງຮຽນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ບົວລະບັດຮັກສາເຄື່ອງໃຊ້ໃນຫ້ອງຮຽນຕ້ອງເຮັດແນວໃດ?
- ສະຫຼຸບ: ບົວລະບັດຮັກສາເຄື່ອງໃຊ້ໃນຫ້ອງຮຽນຕ້ອງບໍ່ເຮັດເປື້ອນ, ບໍ່ໃຫ້ເປ່ເພ, ເຊັດຖູໃຫ້ສະອາດ, ເກັບມ້ຽນໃຫ້ຖືກບ່ອນ ແລະ ເປັນລະບຽບ.
- ທາສີຮູບເດັກນ້ອຍອະນາໄມໂຕະ, ຕັ່ງ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງນຸ່ງ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການເກັບມ້ຽນ ແລະ ບົວລະບັດຮັກສາເຄື່ອງນຸ່ງ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ພວກຫຼານເຫັນຫຍັງໃນຮູບນີ້? ຄວນບົວລະບັດຮັກສາເຄື່ອງນຸ່ງແນວໃດ?
- ສະຫຼຸບ: ການເກັບມ້ຽນເຄື່ອງນຸ່ງຕ້ອງພັບ ແລະ ມ້ຽນໃຫ້ຖືກບ່ອນ, ຕ້ອງຊັກໃຫ້ສະອາດ, ຕາກໃຫ້ແຫ້ງ, ພັບ ແລະ ມ້ຽນເປັນລະບຽບ.
- ທາສີຮູບເດັກນ້ອຍພັບເຄື່ອງ ໂດຍນໍາໃຊ້ສີຕາມໃຈ.

# ເຄື່ອງຫຼິ້ນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການເກັບມ້ຽນ ແລະ ບົວລະບັດຮັກສາເຄື່ອງຫຼິ້ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານມີເຄື່ອງຫຼິ້ນຫຍັງແດ່? ບົວລະບັດຮັກສາເຄື່ອງຫຼິ້ນຕ້ອງເຮັດແນວໃດ?
- ສະຫຼຸບ: ການເກັບມ້ຽນເຄື່ອງຫຼິ້ນຫຼັງຈາກຫຼິ້ນແລ້ວຕ້ອງ ເກັບມ້ຽນໃຫ້ຖືກບ່ອນ, ບໍ່ຖິ້ມ, ບໍ່ມ້າງເພ ແລະ ບໍ່ເຮັດເປື້ອນ.
- ທາສີຮູບເດັກນ້ອຍມ້ຽນເຄື່ອງຫຼິ້ນ ໂດຍນຳໃຊ້ສີຕາມໃຈ.

# ອາຫານ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການເກັບມ້ຽນ ແລະ ບົວລະບັດຮັກສາອາຫານ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ບົວລະບັດຮັກສາອາຫານແນວໃດ?
- ສະຫຼຸບ: ການເກັບມ້ຽນອາຫານຕ້ອງມ້ຽນໃຫ້ຖືກບ່ອນ, ກິນແລ້ວບໍ່ຖິ້ມຊະຊາຍ ເກັບມ້ຽນໃນຕູ້, ປົກປິດບໍ່ໃຫ້ແມງວັນ ແລະ ມົດຕອມ ຫຼື ເກັບມ້ຽນໄວ້ຕູ້ເຢັນ.
- ທາສີຮູບເດັກນ້ອຍມ້ຽນອາຫານ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງດື່ມ




**ຈຸດປະສົງ:** ເພື່ອໃຫ້ເດັກບອກການເກັບມ້ຽນ ແລະ ບົວລະບັດຮັກສາເຄື່ອງດື່ມ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຄວນເກັບມ້ຽນເຄື່ອງດື່ມໄວ້ແນວໃດ?
- ສະຫຼຸບ: ການເກັບມ້ຽນເຄື່ອງດື່ມຕ້ອງອັດຝາ, ມ້ຽນໃຫ້ຖືກບ່ອນ ຫຼື ເກັບມ້ຽນ ໄວ້ຕູ້ເຢັນ ແລະ ກິນແລ້ວບໍ່ຖິ້ມຊະຊາຍ.
- ທາສີຮູບເຄື່ອງດື່ມ ໂດຍນຳໃຊ້ສີຕາມໃຈ.